ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 2330 /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 25 ກໍລະກົດ 2024

# ຂໍ້ຕົກລົງ
# ວ່າດ້ວຍການຈັດສົ່ງ ແລະ ຄຸ້ມຄອງຜູ້ອອກແຮງງານລາວ ທີ່ເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ

- ອີງຕາມ ກົດໝາຍວ່າດ້ວຍການຈັດຫາງານ ສະບັບເລກທີ 37/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ດໍາລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຮງງານ ແລະ ສະຫວັດດີສັງຄົມ ສະບັບເລກທີ 602/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ດໍາລັດວ່າດ້ວຍການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ສະບັບເລກທີ 245/ລບ, ລົງວັນທີ 22 ພຶດສະພາ 2020;
- ອີງຕາມ ໜັງສືສະເໜີຂອງກົມການຈັດຫາງານ ສະບັບເລກທີ 056/ກຈງ, ລົງວັນທີ 09 ມັງກອນ 2024.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດສົ່ງ ແລະ ຄຸ້ມຄອງຜູ້ອອກແຮງງານລາວທີ່ເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວມີຄວາມເປັນເອກະພາບ, ລວມສູນ ແລະ ມີປະສິດທິຜົນ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ອອກແຮງງານຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ສາທາລະນະລັດ ເກົາຫຼີ.

**ມາດຕາ 2 ການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການຢູ່ ສາທາລະນະລັດເກົາຫຼີ**

ການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ແມ່ນຂະບວນການອະນຸຍາດໃຫ້ຜູ້ອອກແຮງງານລາວທີ່ມີມາດຖານ, ເງື່ອນໄຂຄົບຖ້ວນ ແລະ ໄດ້ຖືກຄັດເລືອກ ເພື່ອໄປເຮັດວຽກຕາມລະດູການ ຢູ່ບັນດາເມືອງ ຂອງສາທາລະນະລັດເກົາຫຼີ ທີ່ໄດ້ລົງນາມບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຈ້າງແຮງງານຕາມລະດູການຮ່ວມກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຂອງ ສປປ ລາວ.

**ມາດຕາ 3 ຫຼັກການກ່ຽວກັບການຈັດສົ່ງ ແລະ ການຄຸ້ມຄອງ**

ການຈັດສົ່ງ ແລະ ຄຸ້ມຄອງຜູ້ອອກແຮງງານລາວທີ່ເຮັດວຽກຕາມລະດູການ ຢູ່ສາທາລະນະລັດ ເກົາຫຼີ ປະຕິບັດຕາມຫຼັກການ ດັ່ງ ນີ້:

1. ສອດຄ່ອງກັບນະໂຍບາຍ, ກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ສາທາລະນະລັດ ເກົາຫຼີ;
2. ຮັບປະກັນການອະນຸຍາດຈັດສົ່ງ ລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ ໂດຍຊອບທຳ ບົນພື້ນຖານກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ສາທາລະນະລັດ ເກົາຫຼີ;
4. ຕິດຕາມ ແລະ ໃຫ້ການຊ່ວຍເຫຼືອຜູ້ອອກແຮງງານ ໃນໄລຍະທີ່ເຮັດວຽກຕາມລະດູການ ຢູ່ສາທາລະນະລັດ ເກົາຫຼີ;
5. ຮັບປະກັນໃຫ້ຜູ້ອອກແຮງງານກັບຄືນປະເທດ ພາຍຫຼັງສິ້ນສຸດສັນຍາການຈ້າງງານ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານການຈັດສົ່ງ ແລະ ຄຸ້ມຄອງຜູ້ອອກແຮງງານລາວທີ່ເຮັດວຽກຕາມລະດູການ ຢູ່ສາທາລະນະລັດ ເກົາຫຼີ.

## ໝວດທີ 2
## ການອະນຸຍາດໃຫ້ຊ່ວຍດຳເນີນການຈັດສົ່ງ

**ມາດຕາ 5 ການອະນຸຍາດໃຫ້ຊ່ວຍດຳເນີນການຈັດສົ່ງ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຄົ້ນຄ້ວາ ແລະ ອະນຸຍາດໃຫ້ວິສາຫະກິດບໍລິການຈັດຫາງານ ທີ່ໄດ້ມາດຕະຖານ ແລະ ມີເງື່ອນໄຂຄົບຖ້ວນ ເຮັດໜ້າທີ່ຊ່ວຍດຳເນີນການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ເຊັ່ນ:ການປະສານງານ, ປະກອບເອກະສານ, ແປພາສາ, ນຳສົ່ງ, ຕິດຕາມ ແລະ ໃຫ້ຄວາມເຫຼືອຜູ້ອອກແຮງງານລາວທີ່ໄປເຮັດວຽກຕາມລະດູການ ຢູ່ຕາມບັນດາເມືອງ ຂອງສາທາລະນະລັດ.

ການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ ສາທາລະນະລັດເກົາຫຼີ ຕ້ອງພາຍໃຕ້ການອະນຸຍາດຈັດສົ່ງ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເທົ່ານັ້ນ.

**ມາດຕາ 6 ເງື່ອນໄຂຂອງການມອບໝາຍໃຫ້ຊ່ວຍດຳເນີນການຈັດສົ່ງ**

ເງື່ອນໄຂຂອງການອະນຸຍາດໃຫ້ຊ່ວຍດຳເນີນການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະລັດ ເກົາຫຼີ ມີດັ່ງນີ້:

1. ເປັນວິສາຫະກິດບໍລິການຈັດຫາງານ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວຈັດຫາງານໄປຕ່າງປະເທດ;
2. ມີເມືອງເປົ້າໝາຍ ທີ່ມີຄວາມຕ້ອງການຈ້າງຜູ້ອອກແຮງງານລາວ ໄປເຮັດວຽກຕາມລະດູການ ຢູ່ ສາທາລະນະລັດເກົາຫຼີ ທີ່ຍັງບໍ່ທັນໄດ້ລົງນາມບົດບັນທຶກຄວາມເຂົ້າໃຈ ຮ່ວມກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
3. ມີຜູ້ປະສານງານ ປະຈຳຢູ່ ສາທາລະນະລັດ ເກົາຫຼີ ທີ່ສາມາດສື່ສານພາສາລາວ-ພາສາເກົາຫຼີ ເພື່ອເຮັດໜ້າທີ່ໃນການປະສານງານ, ແປພາສາ, ຕິດຕາມ ແລະ ໃຫ້ການຊ່ວຍເຫຼືອຜູ້ອອກແຮງງານ;
4. ມີຄວາມພ້ອມທາງດ້ານບຸກຄະລາກອນ, ທຶນ ແລະ ສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງ;
5. ສາມາດບັນລຸໂຕເລກຈັດຫາງານພາຍໃນ ແລະ ຈັດຫາງານໄປຕ່າງປະເທດ ທີ່ຖືກມອບໝາຍ ຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
6. ສາມາດແກ້ໄຂບັນຫາທີ່ເກີດຂຶ້ນ ລວມທັງຂໍ້ຂັດແຍ່ງແຮງງານຢ່າງທ່ວງທັນກັບເວລາ.

**ມາດຕາ 7 ຂັ້ນຕອນການອະນຸຍາດໃຫ້ເປັນຜູ້ຊ່ວຍດຳເນີນການຈັດສົ່ງ**

ຂັ້ນຕອນການອະນຸຍາດໃຫ້ວິສາຫະກິດບໍລິການຈັດຫາງານ ເປັນຜູ້ຊ່ວຍດຳເນີນການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ ສາທາລະນະລັດ ເກົາຫຼີ ມີດັ່ງນີ້:

1. ວິສາຫະກິດບໍລິການຈັດຫາງານ ສະເໜີຕໍ່ກົມການຈັດຫາງານ ເພື່ອຂໍອະນຸຍາດເປັນຜູ້ຊ່ວຍໃນວຽກງານການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການຢູ່ ສາທາລະນະລັດ ເກົາຫຼີ;
2. ກົມການຈັດຫາງານ ຄົ້ນຄ້ວາ ແລະ ພິຈາລະນາ ຕາມເງື່ອນໄຂທີ່ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້;
3. ລັດຖະມົນຕີກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ອອກຂໍ້ຕົກລົງອະນຸຍາດໃຫ້ວິສາຫະກິດບໍລິການຈັດຫາງານທີ່ຄົບມາດຖານ ແລະ ເງື່ອນໄຂ ເປັນຜູ້ຊ່ວຍດຳເນີນການຈັດສົ່ງ ຕາມການສະເໜີຂອງກົມການຈັດຫາງານ;
4. ກົມການຈັດຫາງານລົງນາມສັນຍາຮ່ວມກັບວິສາຫະກິດບໍລິການຈັດຫາງານ ທີ່ໄດ້ຮັບອະນຸຍາດ ເພື່ອຈັດຕັ້ງປະຕິບັດການຊ່ວຍຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການຢູ່ ສາທາລະນະລັດ ເກົາຫຼີ.

## ໝວດທີ 3
## ຜູ້ອອກແຮງງານລາວທີ່ໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດ ເກົາຫຼີ

**ມາດຕາ 8 ຜູ້ອອກແຮງງານລາວທີ່ໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດ.ເກົາຫຼີ**

ຜູ້ອອກແຮງງານລາວທີ່ໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດ ເກົາຫຼີ ແມ່ນພົນລະເມືອງລາວທີ່ຄົບມາດຖານ ແລະ ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້ ແລະ ສອດຄ່ອງກັບຄວາມຕ້ອງການຂອງ ບັນດາເມືອງທີ່ກ່ຽວຂ້ອງ ໂດຍໄດ້ຮັບອະນຸຍາດ ຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**ມາດຕາ 9 ເງື່ອນໄຂຂອງຜູ້ອອກແຮງງານລາວທີ່ໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດ ເກົາຫຼີ**

ຜູ້ອອກແຮງງານລາວທີ່ໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດ ເກົາຫຼີ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນພົນລະເມືອງລາວ ທີ່ມີສຳມະໂນຄົວ ຢູ່ເມືອງ ແລະ ແຂວງ ທີ່ໄດ້ລະບຸໄວ້ຕາມບົດບັນທຶກ ຄວາມເຂົ້າໃຈກັບບັນດາເມືອງ ຢູ່ສາທາລະນະລັດ ເກົາຫຼີ ທີ່ໄດ້ລົງນາມກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
2. ຜູ້ທີ່ປະກອບອາຊີບທາງດ້ານກະສິກຳ ໂດຍສະເພາະແມ່ນ ເຮັດສວນ ຫຼື ເຮັດນາ, ລ້ຽງສັດ ແລະ ການປະມົງເປັນພື້ນຖານ ໃນການດຳລົງຊີວິດ ແລະ ທຳມາຫາກິນ;
3. ມີຄວາມສະໝັກໃຈໄປເຮັດວຽກຕາມລະດູການ ເພື່ອພັດທະນາທັກສະ ແລະ ສ້າງລາຍຮັບໃຫ້ຄອບຄົວ ທາງດ້ານການກະສິກຳ ແລະ ການປະມົງ ຢູ່ສາທາລະນະລັດ ເກົາຫຼີ ຢ່າງແທ້ຈິງ;
4. ມີສຸຂະພາບແຂງແຮງ, ຕາບໍ່ບອດສີ, ບໍ່ຕິດຢາເສບຕິດ ແລະ ບໍ່ເປັນພະຍາດຕິດຕໍ່ ຕາມເງື່ອນໄຂດ້ານສຸຂະພາບ ຂອງສາທາລະນະລັດ ເກົາຫຼີ, ຖ້າເປັນຜູ້ຍິງ ແມ່ນບໍ່ຢູ່ໃນໄລຍະຖືພາ ແລະ ຕ້ອງເປັນຜູ້ຍິງທີ່ເກີດລູກກາຍ ໜຶ່ງ ປີຂຶ້ນໄປ;
5. ເປັນບຸກຄົນທີ່ບໍ່ນອນໃນບັນຊີຫ້າມເດີນທາງເຂົ້າ-ອອກ ສາທາລະນະລັດ ເກົາຫຼີ;
6. ໄດ້ຮັບການຢັ້ງຢືນຈາກຄອບຄົວ ແລະ ອົງການປົກຄອງຂັ້ນບ້ານ;
7. ມີເງື່ອນໄຂອື່ນ ທີ່ເຫັນວ່າຈຳເປັນ ພາຍໃຕ້ການກຳນົດຂອງເມືອງ ທີ່ຈະຮັບແຮງງານ ເທົ່ານັ້ນ.

**ມາດຕາ 10 ສິດ ແລະ ໜ້າທີ່ຂອງຜູ້ອອກແຮງງານລາວທີ່ໄປເຮັດວຽກຕາມລະດູການ ຢູ່ ສາທາລະນະລັດ ເກົາຫຼີ**

ຜູ້ອອກແຮງງານລາວທີ່ຈະໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດ ເກົາຫຼີ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໄດ້ຮັບຄ່າແຮງງານ ແລະ ຄ່າຕອບແທນອື່ນ ຕາມສັນຍາ ແລະ ຕາມກົດໝາຍ;

2. ໄດ້ຮັບການຊ່ວຍເຫຼືອຈາກພາກສ່ວນທີ່ກ່ຽວຂ້ອງ ໃນກໍລະນີມີຂໍ້ຂັດແຍ່ງດ້ານແຮງງານ, ຖືກເອົາປຽບ ຫຼື ຖືກກົດຂີ່ຂູດຮີດແຮງງານ;
3. ເກັບຮັກສາ ເອກະສານສັນຍາ ແລະ ເອກະສານອື່ນ ທີ່ກ່ຽວຂ້ອງກັບຕົນ;
4. ຍື່ນຄໍາຮ້ອງ ຫຼື ຄໍາສະເໜີ ຕໍ່ອົງການທີ່ກ່ຽວຂ້ອງ;
5. ປະຕິບັດກົດໝາຍ ແລະ ຮີດຄອງປະເພນີ ຂອງ ສປປ ລາວ ແລະ ສາທາລະນະລັດ ເກົາຫຼີ;
6. ອະນຸລັກຮັກສາ ແລະ ສົ່ງເສີມ ປະເພນີອັນດີງາມ ຂອງຊາດ;
7. ຕ້ອງໄດ້ຮັບການຝຶກອົບຮົມ ຕາມຫຼັກສູດທີ່ກ່ຽວຂ້ອງ ກ່ອນທີ່ຈະໄປເຮັດວຽກ ຢູ່ສາທາລະນະລັດ ເກົາຫຼີ;
8. ເຮັດວຽກ ຕາມສະຖານທີ່ ທີ່ກໍານົດໄວ້ ແລະ ປະຕິບັດກົດລະບຽບ ໃນສະຖານທີ່ເຮັດວຽກ ຢ່າງເຂັ້ມງວດ;
9. ກັບຄືນປະເທດ ພາຍຫຼັງສິ້ນສຸດສັນຍາ;
10. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ຈາກການລະເມີດສັນຍາ, ກົດໝາຍ ຂອງ ສປປ ລາວ ແລະ ກົດໝາຍ ຂອງ ສາທາລະນະລັດເກົາຫຼີ;
11. ປະກອບເອກະສານສ່ວນຕົວ ເປັນຕົ້ນ ປຶ້ມສໍາມະໂນຄົວ, ບັດປະຈໍາຕົວ, ໃບແຈ້ງໂທດ ແລະ ໜັງສືຜ່ານແດນ;
12. ຮັບຜິດຊອບຄ່າໃຊ້ຈ່າຍໃນການປະກອບເອກະສານ, ກວດສຸຂະພາບ, ວິຊາ, ປະກັນໄພ, ປີ້ຍົນ ໄປ-ກັບ ແລະ ຄ່າໃຊ້ຈ່າຍອື່ນທີ່ກ່ຽວຂ້ອງ;
13. ປະຕິບັດ ຕາມສັນຍາຜູກພັນ ແລະ ສັນຍາແຮງງານ;
14. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 4
## ຂັ້ນຕອນການຈັດສົ່ງ

### ມາດຕາ 11 ຂັ້ນຕອນການຈັດສົ່ງ

ຂັ້ນຕອນການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ປະກອບມີ: ການປະກາດຮັບສະໝັກ, ການຂຶ້ນທະບຽນ, ການຄັດເລືອກ, ການປະກອບເອກະສານ, ການກວດສຸຂະພາບ, ການຝຶກອົບຮົມຂັ້ນພື້ນຖານ, ການໃຫ້ຂໍ້ມູນກ່ອນການຈັດສົ່ງ, ການອະນຸຍາດຈັດສົ່ງ ແລະ ການຈັດສົ່ງຜູ້ອອກແຮງງານໄປເຮັດວຽກ ຢູ່ສາທາລະນະລັດເກົາຫຼີ.

### ມາດຕາ 12 ການປະກາດຮັບສະໝັກ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກໜັງສືແຈ້ງການ ຫາພະແນກ ແຮງງານ ແລະ ສະຫວັດດີການສັງຄົມ ແຂວງ/ນະຄອນຫຼວງ, ພາຍຫຼັງທີ່ໄດ້ຮັບແຈ້ງໂກຕ້າຈ້າງແຮງງານລາວຈາກຝ່າຍ ສາທາລະນະລັດ ເກົາຫຼີ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ/ນະຄອນຫຼວງ ອອກໜັງສືແຈ້ງການ ເຖິງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ/ນະຄອນ ເພື່ອແຈ້ງໃຫ້ອົງການປົກຄອງບ້ານ ປະກາດແຈ້ງໃຫ້ຜູ້ອອກແຮງງານລາວ ທີ່ສົນໃຈໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ເພື່ອໄປຂຶ້ນທະບຽນຢູ່ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ.

### ມາດຕາ 13 ການຂຶ້ນທະບຽນ

ຜູ້ອອກແຮງງານລາວທີ່ມີຈຸດປະສົງຢາກໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ຕ້ອງໄປຂຶ້ນທະບຽນ ຢູ່ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ/ນະຄອນ ຫຼື ຜ່ານທາງອີເລັກໂຕນິກ ຕາມແຈ້ງການຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ/ນະຄອນຫຼວງ ແຕ່ລະຄັ້ງ.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ກຳນົດແບບຟອມນຳໃຊ້ເຂົ້າໃນການຂຶ້ນທະບຽນຜູ້ອອກແຮງງານລາວທີ່ສົນໃຈໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ແລະ ແຈກຢາຍໃຫ້ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງໃນຂອບເຂດທົ່ວປະເທດ.

**ມາດຕາ 14 ການຄັດເລືອກ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຮ່ວມກັບພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ຫຼື ນະຄອນຫຼວງ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ຫຼື ນະຄອນ ແລະ ບໍລິສັດຈັດຫາງານ ທີ່ຖືກມອບໝາຍໃຫ້ຊ່ວຍດຳເນີນການຈັດສົ່ງ ຄັດເລືອກເອົາຜູ້ອອກແຮງງານລາວ ເພື່ອໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ຕາມເງື່ອນໄຂ, ຂັ້ນຕອນ ແລະ ອົງປະກອບ ທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມໄດ້ກຳນົດ ໂດຍໃຫ້ສອດຄ່ອງກັບຄວາມຕ້ອງການບັນດາເມືອງ ຂອງສາທາລະນະລັດເກົາຫຼີ.

ການຄັດເລືອກເອົາຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີໃນແຕ່ລະຄັ້ງ ຕ້ອງຄັດເລືອກເອົາຜູ້ທີ່ໄດ້ໄປຂຶ້ນທະບຽນນຳຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ຫຼື ນະຄອນ ເທົ່ານັ້ນ.

**ມາດຕາ 15 ການປະກອບເອກະສານ**

1. ເອກະສານທີ່ຜູ້ອອກແຮງງານລາວຕ້ອງປະກອບ ແລະ ກະກຽມເບື້ອງຕົ້ນ ເວລາສຳພາດຄັດເລືອກ ມີດັ່ງນີ້:
   - ສຳເນົາບັດປະຈຳຕົວ ( ໃຫ້ຖືສະບັບແທ້ ມາພ້ອມ);
   - ສຳເນົາສຳມະໂນຄົວ ( ໃຫ້ຖືສະບັບແທ້ສະບັບ ມາພ້ອມ);
   - ໃບຢັ້ງຢືນທີ່ຢູ່ ສະບັບແທ້;
   - ຮູບ ຂະໜາດ 3 X 4 ຊມ ຈຳນວນ 1 ແຜ່ນ;
   - ຮູບ ຂະໜາດ 3.5 X 4.5 ຊມ ຈຳນວນ 1 ແຜ່ນ;
   - ສຳເນົາ ໜັງສືຜ່ານແດນ (ຖ້າມີ).
2. ຜູ້ອອກແຮງງານລາວທີ່ຖືກຄັດເລືອກຕ້ອງປະກອບເອກະສານ ດັ່ງນີ້:

ຜູ້ອອກແຮງງານລາວທີ່ໄດ້ຖືກຄັດເລືອກຕ້ອງປະກອບເອກະສານສ່ວນຕົວດ້ວຍຕົວເອງ ຄື: ໜັງສືຜ່ານແດນ (Passport) ແລະ ໃບແຈ້ງໂທດເລກ 3. ສຳລັບສັນຍາແຮງງານ, ສັນຍາຜູກພັນ, ສັນຍາກູ້ຢືມເງິນກັບສະຖາບັນການເງິນ (ຖ້າຈຳເປັນ), ໃບປະກັນໄພ, ໃບກວດສຸຂະພາບ, ເປີດບັນຊີເງິນຝາກທະນາຄານ, ວີຊາເຮັດວຽກ E-8, ບັນຊີລາຍຊື່ແຮງງານ ແລະ ໃບອະນຸຍາດຈັດສົ່ງ ແມ່ນວິສາຫະກິດບໍລິການຈັດຫາງານ ທີ່ຖືກມອບໝາຍ ເປັນຜູ້ຮັບຜິດຊອບດຳເນີນການໃຫ້.

**ມາດຕາ 16 ການກວດສຸຂະພາບ**

ຜູ້ອອກແຮງງານລາວທີ່ຖືກຄັດເລືອກໃຫ້ໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ຕ້ອງໄດ້ຮັບການກວດສຸຂະພາບ ຫາພະຍາດຕ້ອງຫ້າມ ຢູ່ຕາມໂຮງໝໍ, ຄລີນິກ ຫຼື ສູນກວດສຸຂະພາບ ຕາມການກຳນົດຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເທົ່ານັ້ນ.

**ມາດຕາ 17 ການປະກັນໄພແຮງງານ**

ຜູ້ອອກແຮງງານລາວທີ່ໄດ້ຮັບອະນຸຍາດໃຫ້ໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ຕ້ອງໄດ້ຊື້ປະກັນໄພ ຕາມການກຳນົດຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ທີ່ສາມາດຄຸ້ມຄອງໃນໄລຍະການເດີນທາງ ແລະ ເວລາທີ່ເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ຕະຫຼອດສັນຍາຈ້າງງານ.

ມາດຕາ 18 ການຝຶກອົບຮົມຂັ້ນພື້ນຖານ

ຜູ້ອອກແຮງງານລາວທີ່ຖືກຄັດເລືອກ ຕ້ອງໄດ້ຮັບການຝຶກອົບຮົມຂັ້ນພື້ນຖານ ຕາມມາດຖານ ແລະ ເງື່ອນໄຂ ຂອງບັນດາເມືອງຢູ່ ສາທາລະນະລັດເກົາຫຼີ ເປັນຕົ້ນ: ພາສາເກົາຫຼີ, ວັດທະນະທຳ, ລະບຽບການ ແລະ ສີມືແຮງງານ ເພື່ອຮັບປະກັນໃຫ້ຜູ້ອອກແຮງງານລາວທີ່ຖືກຈັດສົ່ງໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ໄດ້ຄຸນນະພາບ. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ກຳນົດຫຼັກສູດຂອງການຝຶກອົບຮົມດັ່ງກ່າວ.

ມາດຕາ 19 ການໃຫ້ຂໍ້ມູນກ່ອນການຈັດສົ່ງ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ດຳເນີນການໃຫ້ຂໍ້ມູນຜູ້ອອກແຮງງານ ກ່ອນການເດີນທາງໄປເຮັດວຽກຕາມລະດູການ ຢູ່ ສາທາລະນະລັດເກົາຫຼີ ຕາມຫຼັກສູດທີ່ ໄດ້ສ້າງ ແລະ ປັບປຸງໃນແຕ່ລະໄລຍະ ໂດຍຜູ້ຊ່ວຍດຳເນີນການຈັດສົ່ງ ເປັນຜູ້ກະກຽມສະຖານ ທີ່, ຄວາມພ້ອມ ແລະ ສິ່ງອຳນວຍຄວາມສະດວກໃນແຕ່ລະຄັ້ງ. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ກຳນົດຫຼັກສູດການໃຫ້ຂໍ້ມູນກ່ອນການຈັດສົ່ງ.

ມາດຕາ 20 ການອະນຸຍາດຈັດສົ່ງ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ອະນຸມັດບັນຊີລາຍຊື່ ແລະ ໃບອະນຸຍາດຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ທີ່ໄດ້ຜ່ານ ຂັ້ນຕອນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຫາ ມາດຕາ 19 ຂອງຂໍ້ຕົກລົງສະບັບນີ້ ຕາມການສະເໜີຂອງບໍລິສັດຈັດຫາງານທີ່ຖືກມອບໝາຍໃຫ້ຊ່ວຍດຳເນີນການຈັດສົ່ງ.

## ໝວດທີ5
## ການຄຸ້ມຄອງຜູ້ອອກແຮງງານ

ມາດຕາ 21 ການນຳສົ່ງຜູ້ອອກແຮງງານ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຮ່ວມກັບບໍລິສັດຈັດຫາງານທີ່ຖືກມອບໝາຍເດີນທາງຕິດຕາມ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ອອກແຮງງານ ໃນການແຈ້ງປີ້ການເດີນທາງ, ແຈ້ງດ່ານຫຼວດກວດຄົນເຂົ້າ-ອອກເມືອງ, ແຈ້ງພາສີ ແລະ ນຳສົ່ງຜູ້ອອກແຮງງານຮອດເມືອງ ຂອງສາທາລະນະລັດເກົາຫຼີ ທຸກຄັ້ງ.

ມາດຕາ 22 ການຕິດຕາມ

ວິສາຫະກິດບໍລິການຈັດຫາງານ ທີ່ໄດ້ຮັບການມອບໝາຍ ແຈ້ງຊື່ພະນັກງານຂອງຕົນ ທີ່ສາມາດສື່ສານພາສາລາວ ແລະ ພາສາເກົາຫຼີ ເພື່ອໄປປະຈຳຢູ່ເມືອງ ທີ່ຜູ້ອອກແຮງງານ ເຮັດວຽກຢູ່ ຢ່າງໜ້ອຍ ເມືອງ ລະ 1 ຄົນ ເພື່ອຕິດຕາມ ແລະ ຊ່ວຍເຫຼືອແຮງງານ ຈົນສິ້ນສຸດສັນຍາຈ້າງງານ ໃຫ້ ກະຊວງແຮງງານ ແລະ ສະຫວັດດີການສັງຄົມຊາບ.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແຈ້ງຂໍ້ມູນຂອງພະນັກງານທີ່ເຮັດໜ້າທີ່ຕິດຕາມ ແລະ ຊ່ວຍເຫຼືອຜູ້ອອກແຮງງານ ໃຫ້ເມືອງຂອງ ສາທາລະນະລັດເກົາຫຼີ ຊາບ ເພື່ອອຳນວຍຄວາມສະດວກໃນການເຄື່ອນໄຫວຕິດຕາມ ແລະ ຊ່ວຍເຫຼືອຜູ້ອອກແຮງງານ.

ມາດຕາ 23 ການສະໜອງຂໍ້ມູນຂອງຜູ້ອອກແຮງງານ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະໜອງບັນຊີລາຍຊື່ຂອງຜູ້ອອກແຮງງານລາວ ທີ່ອະນຸຍາດໃຫ້ໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ໃນແຕ່ລະຄັ້ງ ໃຫ້ສະຖານເອກອັກຄະລັດຖະທູດແຫ່ງ ສປປ ລາວ ປະຈຳ ສາທາລະນະລັດເກົາຫຼີ ເພື່ອຊ່ວຍຕິດຕາມ ແລະ ຊ່ວຍເຫຼືອຜູ້ອອກແຮງງານ ໃນໄລຍະເວລາທີ່ເຮັດວຽກ ຢູ່ສາທາລະນະລັດເກົາຫຼີ.

ມາດຕາ 24 ການກັບຄືນປະເທດ

ວິສາຫະກິດບໍລິການຈັດຫາງານ ທີ່ໄດ້ຮັບການມອບໝາຍ ຊ່ວຍດຳເນີນການຈັດສົ່ງ ຮັບປະກັນໃນການນຳເອົາຜູ້ອອກແຮງງານທີ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນກັບຄືນປະເທດ ພາຍຫຼັງທີ່ຄົບສັນຍາ. ວິສາຫະກິດບໍລິການຈັດຫາງານ ຕ້ອງເປັນເຈົ້າການໃນການແກ້ໄຂບັນຫາ ແລະ ນຳເອົາຜູ້ອອກແຮງງານທີ່ໂຕນໜີກັບຄືນປະເທດ ພ້ອມທັງສະໜອງເຂົາເຈົ້າເຂົ້າໃສ່ຕຳແໜ່ງງານວ່າງພາຍໃນປະເທດ.

ມາດຕາ 25 ການປະເມີນ

ວິສາຫະກິດບໍລິການຈັດຫາງານ ທີ່ຖືກມອບໝາຍ ຮ່ວມກັບ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ ດຳເນີນການປະເມີນສະພາບການເຮັດວຽກ ແລະ ຄວາມເພິ່ງພໍໃຈຂອງຜູ້ອອກແຮງງານ ໃນເວລາທີ່ຜູ້ອອກແຮງງານ ໄດ້ເດີນທາງກັບຄືນປະເທດ ກ່ອນກັບສູ່ພູມລຳເນົາ ເພື່ອເປັນຂໍ້ມູນໃນການປັບປຸງລະບົບການຈັດສົ່ງຜູ້ອອກແຮງງານລະດູການ ແລ້ວລາຍງານຜົນຂອງການປະເມີນໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຊາບ.

ມາດຕາ 26 ການລາຍງານ

ວິສາຫະກິດບໍລິການຈັດຫາງານ ທີ່ຖືກມອບໝາຍ ຕ້ອງລາຍງານຂໍ້ມູນຂອງຜູ້ອອກແຮງງານທີ່ໄດ້ຮັບອະນຸຍາດຈັດສົ່ງ, ຜູ້ອອກແຮງງານທີ່ທີ່ກັບຄືນປະເທດ ແລະ ຜູ້ອອກແຮງງານໂຕນໜີ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມຊາບ.

ມາດຕາ 27 ການສ້າງກຸ່ມຜູ້ສຳເລັດການເຮັດວຽກ

ວິສາຫະກິດບໍລິການຈັດຫາງານ ທີ່ຖືກມອບໝາຍ ຕ້ອງສ້າງກຸ່ມ (ເຕົ້າໂຮມ) ຜູ້ສຳເລັດການເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ໂດຍໃຫ້ມີຖານຂໍ້ມູນຂອງຜູ້ອອກແຮງງານລະອຽດ ເພື່ອໃຫ້ອົງການຄຸ້ມຄອງແຮງງານ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ ສາມາດຕິດຕາມ, ປະສານງານໄດ້ຢ່າງສະດວກ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ເຂົາເຈົ້າເຂົ້າເຖິງການມີວຽກເຮັດງານທຳຢູ່ພາຍໃນປະເທດ.

## ໝວດທີ 6
## ຜູ້ຮັບຜິດຊອບວຽກງານການຈັດສົ່ງ

ມາດຕາ 28 ຜູ້ຮັບຜິດຊອບໃນການຈັດສົ່ງ

ຜູ້ຮັບຜິດຊອບວຽກງານການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ປະກອບດ້ວຍ:

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
2. ພະແນກ ແຮງງານ ແລະ ສະຫວັດດີການສັງຄົມແຂວງ/ນະຄອນຫຼວງວຽງຈັນ;
3. ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ/ນະຄອນ;
4. ອົງການປົກຄອງບ້ານ:
5. ວິສາຫະກິດບໍລິການຈັດຫາງານທີ່ໄດ້ຮັບອະນຸຍາດໃຫ້ຊ່ວຍດຳເນີນການຈັດສົ່ງ;
6. ຜູ້ປົກຄອງແຮງງານ.

ມາດຕາ 29 ສິດ ແລະ ໜ້າທີ່ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ປະສານງານກັບເມືອງ, ແຂວງ ແລະ ພາກສ່ວນກ່ຽວຂ້ອງ ຂອງ ສາທາລະນະລັດເກົາຫຼີ ເພື່ອຮ່ວມມືກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນການຈ້າງຜູ້ອອກແຮງງານລາວຕາມລະດູການ;

2. ລົງນາມບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຈ້າງຜູ້ອອກແຮງງານລາວຕາມລະດູການ ຮ່ວມກັບ ເມືອງຂອງ ສາທາລະນະລັດເກົາຫຼີ;
3. ຄົ້ນຄວ້າ, ພິຈາລະນາ ແລະ ສະເໜີອອກຂໍ້ຕົກລົງອະນຸມັດ, ຕໍ່ ຫຼື ຍົກເລີກ ໃຫ້ວິສາຫະກິດບໍລິການຈັດຫາງານຊ່ວຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ;
4. ລົງນາມສັນຍາຮ່ວມກັບວິສາຫະກິດບໍລິການຈັດຫາງານ ທີ່ໄດ້ຮັບອະນຸຍາດໃຫ້ເປັນຜູ້ຊ່ວຍໃນການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ;
5. ນໍາພາ ແລະ ຕິດຕາມການຮັບສະໝັກ ແລະ ຄັດເລືອກເອົາຜູ້ອອກແຮງງານໃນແຕ່ລະຄັ້ງ;
6. ປະສານງານ ແລະ ຮ່ວມມືກັບບັນດາທະນາຄານ ຫຼື ສະຖາບັນການເງິນ ເພື່ອອໍານວຍຄວາມສະດວກໃຫ້ແຮງງານກູ້ຢືມເງິນ ຫຼື ເປີດບັນຊີ ເພື່ອສະດວກໃນການໂອນເງິນກັບຄືນປະເທດ;
7. ໂຄສະນາ ແລະ ເຜີຍແຜ່ ຂໍ້ມູນຂ່າວສານ ກ່ຽວກັບການໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ;
8. ອະນຸມັດບັນຊີລາຍຊື່ ແລະ ໃບອະນຸຍາດ ການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ;
9. ຕິດຕາມການນໍາສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ບັນດາເມືອງ ຂອງສາທາລະນະລັດເກົາຫຼີ;
10. ສະໜອງບັນຊີລາຍຊື່ຂອງຜູ້ອອກແຮງງານລາວທີ່ອະນຸຍາດຈັດສົ່ງໃນແຕ່ລະຄັ້ງ ໃຫ້ສະຖານເອກອັກຄະລັດຖະທູດແຫ່ງ ສປປ ລາວ ປະຈໍາ ສາທາລະນະລັດເກົາຫຼີ ແລະ ພາກສ່ວນກ່ຽວຂ້ອງ;
11. ດໍາເນີນການຝຶກອົບຮົມກ່ອນການເດີນທາງໃຫ້ກັບຜູ້ອອກແຮງງານທີ່ໄດ້ຮັບອະນຸຍາດຈັດສົ່ງ;
12. ແຈ້ງລາຍຊື່ຜູ້ທີ່ເຮັດໜ້າທີ່ຊ່ວຍໃນການຕິດຕາມ ແລະ ຄຸ້ມຄອງຜູ້ອອກແຮງງານ ປະຈໍາຢູ່ໃນແຕ່ລະເມືອງ ໃຫ້ຝ່າຍ ສາທາລະນະລັດເກົາຫຼີ ຊາບ;
13. ຮັບ ແລະ ພິຈາລະນາ ແກ້ໄຂຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ;
14. ປະຕິບັດມາດຕະການຕໍ່ ຜູ້ອອກແຮງງານ ແລະ ວິສາຫະກິດບໍລິການຈັດຫາງານທີ່ຖືກມອບໝາຍ ທີ່ເຄື່ອນໄຫວບໍ່ຖືກຕ້ອງ;
15. ປະສານ ສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານຈັດສົ່ງ ແລະ ຄຸ້ມຄອງຜູ້ອອກແຮງງານລາວ ໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ;
16. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຈັດສົ່ງ ໃຫ້ຄະນະນໍາກະຊວງແຮງງານ ແລະ ສະຫວັດ ດີການສັງຄົມ ຢ່າງເປັນປົກກະຕິ;
17. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 30 ສິດ ແລະ ໜ້າທີ່ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ/ນະຄອນຫຼວງ**

ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ/ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ປະສານງານກັບຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ/ນະຄອນ ແລະ ຂະແໜງການທີ່ກ່ຽວຂ້ອງເພື່ອອໍານວຍຄວາມສະດວກໃຫ້ແກ່ການປະກາດຮັບສະໝັກ ແລະ ຄັດເລືອກເອົາຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ;
2. ຕິດຕາມ, ອໍານວຍຄວາມສະດວກ ແລະ ຮ່ວມຄັດເລືອກເອົາຜູ້ອອກແຮງງານ;
3. ໂຄສະນາ ແລະ ເຜີຍແຜ່ ຂໍ້ມູນຂ່າວສານກ່ຽວກັບການໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ;
4. ຕິດຕາມ ແລະ ລາຍງານການເຄື່ອນໄຫວຂອງບຸກຄົນ ແລະ ນິຕິບຸກຄົນ ທີ່ບໍ່ໄດ້ຮັບອະນຸຍາດ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຊາບ;

5. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ໂດຍການປະສານສົມທົບກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
6. ຊຸກຍູ້ໃຫ້ຜູ້ອອກແຮງງານທີ່ສິ້ນສຸດສັນຍາກັບຄືນປະເທດ ແລະ ໃຫ້ການຮ່ວມມືໃນການປະຕິບັດມາດຕະການຕໍ່ຜູ້ອອກແຮງງານທີ່ລະເມີດສັນຍາ;
7. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມຊາບ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 31 ສິດ ແລະ ໜ້າທີ່ຂອງຫ້ອງການ ຮສສ ເມືອງ/ນະຄອນ**

ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ/ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ປະສານງານກັບອົງການປົກຄອງຂັ້ນບ້ານ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກໃຫ້ແກ່ວຽກງານການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ;
2. ປະກາດຮັບສະໝັກ, ຂຶ້ນທະບຽນ, ເຂົ້າຮ່ວມການສຳພາດ ແລະ ຄັດເລືອກ ເອົາຜູ້ອອກແຮງງານຕາມມາດຖານ ແລະ ເງື່ອນໄຂ ທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ກຳນົດ;
3. ຕິດຕາມ, ປະສານງານກັບພາກສ່ວນການຈັດຕັ້ງກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການຄັດເລືອກເອົາຜູ້ອອກແຮງງານ;
4. ສົມທົບກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ພະແນກ ຮສສ ແຂວງ/ນະຄອນຫຼວງ ໃນການໂຄສະນາ ແລະ ເຜີຍແຜ່ ຂໍ້ມູນຂ່າວສານ ກ່ຽວກັບການໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ;
5. ຕິດຕາມ ແລະ ໃຫ້ການຊ່ວຍເຫຼືອ ຜູ້ອອກແຮງງານຂອງ ເມືອງ ທີ່ໄດ້ຖືກຈັດສົ່ງໄປເຮັດວຽກຕາມລະດູການ ທີ່ ສ. ເກົາຫຼີ ຕາມຂອບເຂດຄວາມຮັບຜິດຊອບ;
6. ຕິດຕາມ ແລະ ລາຍງານການເຄື່ອນໄຫວຂອງບຸກຄົນ ແລະ ນິຕິບຸກຄົນ ທີ່ບໍ່ໄດ້ຮັບອະນຸຍາດ ໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ/ນະຄອນຫຼວງວຽງຈັນ ຊາບ;
7. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ໂດຍການປະສານສົມທົບກັບພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ/ນະຄອນຫຼວງ;
8. ຊຸກຍູ້ໃຫ້ຜູ້ອອກແຮງງານທີ່ສິ້ນສຸດສັນຍາກັບຄືນປະເທດ ແລະ ໃຫ້ການຮ່ວມມື ໃນການປະຕິບັດມາດຕະການຕໍ່ຜູ້ອອກແຮງງານທີ່ລະເມີດສັນຍາ;
9. ຕິດຕາມ, ເກັບກຳຈຳນວນ ແລະ ປະເມີນຜົນການເຮັດວຽກຂອງຜູ້ອອກແຮງງານ ພາຍຫຼັງກັບຄືນປະເທດ;
10. ສະຫຼຸບ ແລະ ລາຍງານ ຜົນການຮັບສະໝັກ ແລະ ຄັດເລືອກ ໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ/ນະຄອນຫຼວງຊາບ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 32 ສິດ ແລະ ໜ້າທີ່ອົງການປົກຄອງຂັ້ນບ້ານ**

ອົງການປົກຄອງຂັ້ນບ້ານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ແຈ້ງການ ກ່ຽວກັບການປະກາດຮັບສະໝັກເອົາຜູ້ອອກແຮງງານໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ;
2. ຕິດຕາມ ແລະ ອຳນວຍຄວາມສະດວກໃຫ້ແກ່ການຄັດເລືອກເອົາຜູ້ອອກແຮງງານ;
3. ອຳນວຍຄວາມສະດວກໃຫ້ແກ່ການປະກອບເອກະສານຂອງຜູ້ອອກແຮງງານ;
4. ຢັ້ງຢືນເອກະສານຮັບປະກັນການໄປເຮັດວຽກຂອງຜູ້ອອກແຮງງານ;
5. ໂຄສະນາ ແລະ ເຜີຍແຜ່ ຂໍ້ມູນຂ່າວສານກ່ຽວກັບການໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ;

6. ຕິດຕາມ ແລະ ລາຍງານການເຄື່ອນໄຫວຂອງບຸກຄົນ ແລະ ນິຕິບຸກຄົນ ທີ່ບໍ່ໄດ້ຮັບອະນຸຍາດ ໃຫ້ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ/ນະຄອນ ຊາບ;
7. ຮັບ ແລະ ພິຈາລະນາ ແກ້ໄຂຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ໂດຍການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
8. ເປັນເຈົ້າການໃນການປະສານກັບຄອບຄົວຂອງຜູ້ອອກແຮງງານ ເພື່ອຊຸກຍູ້ໃຫ້ຜູ້ອອກແຮງງານທີ່ສິ້ນສຸດສັນຍາກັບຄືນປະເທດ ແລະ ໃຫ້ການຮ່ວມມື ໃນການປະຕິບັດມາດຕະການຕໍ່ຜູ້ອອກແຮງງານທີ່ລະເມີດສັນຍາ;
9. ຕິດຕາມ ແລະ ເກັບກໍາຈໍານວນຜູ້ອອກແຮງງານທີ່ກັບຄືນປະເທດ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 33 ສິດ ແລະ ໜ້າທີ່ຜູ້ປົກຄອງ

ຜູ້ປົກຄອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບປະກັນບໍ່ໃຫ້ຜູ້ອອກແຮງງານໂຕນໜີຈາກສະຖານທີ່ເຮັດວຽກ;
2. ເປັນເຈົ້າການໃນການນໍາເອົາຜູ້ອອກແຮງງານທີ່ໂຕນໜີກັບຄືນປະເທດ;
3. ຮັບປະກັນໃຫ້ຜູ້ອອກແຮງງານເຮັດວຽກຕາມສັນຍາຈ້າງງານ ແລະ ພາຍຫຼັງສິ້ນສຸດສັນຍາ ຕ້ອງກັບຄືນປະເທດ;
4. ຮັບຜິດຊອບຕໍ່ກັບການປະພຶດຂອງຜູ້ອອກແຮງງານ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
5. ຕິດຕາມ ແລະ ລາຍງານການເຄື່ອນໄຫວຂອງບຸກຄົນ ແລະ ນິຕິບຸກຄົນ ທີ່ບໍ່ໄດ້ຮັບອະນຸຍາດໃຫ້ ອົງການປົກຄອງຂັ້ນບ້ານ ຊາບ;
6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 34 ສິດ ແລະ ພັນທະ ຂອງວິສາຫະກິດບໍລິການຈັດຫາງານ ທີ່ຖືກມອບໝາຍ

ວິສາຫະກິດບໍລິການຈັດຫາງານ ທີ່ຖືກມອບໝາຍ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ປະກອບເອກະສານໃຫ້ຜູ້ອອກແຮງງານ ທີ່ຖືກຄັດເລືອກເພື່ອຂໍອະນຸຍາດຈັດສົ່ງ ຕາມລະບຽບການ;
2. ແປພາສາໃນເວລາທີ່ມີກອງປະຊຸມປຶກສາຫາລືກັບຝ່າຍ ສາທາລະນະລັດເກົາຫຼີ, ແປເອກະສານທີ່ເປັນພາສາເກົາຫຼີ ແລະ ໃນເວລາທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມມີການພົວພັນກັບຝ່າຍ ສາທາລະນະລັດເກົາຫຼີ;
3. ນໍາພາຜູ້ອອກແຮງງານທີ່ຖືກຄັດເລືອກໄປກວດສຸຂະພາບທີ່ໂຮງໝໍ ຫຼື ຄລີນິກ ທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ກໍານົດ ແລະ ປະກອບເອກະສານ ຊ່ວຍຜູ້ອອກແຮງງານໃນການກວດສຸຂະພາບ;
4. ສະເໜີຂໍວີຊາເຮັດວຽກໃຫ້ຜູ້ອອກແຮງງານນໍາສະຖານເອກອັກຄະລັດຖະທູດ ແຫ່ງສາທາລະນະລັດເກົາຫຼີ ປະຈໍາ ສປປ ລາວ;
5. ນໍາສົ່ງຜູ້ອອກແຮງງານເດີນທາງໄປ ສາທາລະນະລັດເກົາຫຼີ ຕາມການອະນຸຍາດຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
6. ສະເໜີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແຈ້ງລາຍຊື່ພະນັກງານ ເພື່ອຊ່ວຍຕິດຕາມ ແລະ ຄຸ້ມຄອງຜູ້ອອກແຮງງານ ໃຫ້ຝ່າຍ ສາທາລະນະລັດເກົາຫຼີ ຊາບ;
7. ຕິດຕາມ ແລະ ຄຸ້ມຄອງ ເພື່ອບໍ່ໃຫ້ຜູ້ອອກແຮງງານໂຕນໜີຈາກສະຖານທີ່ເຮັດວຽກ;
8. ເປັນເຈົ້າການໃນການນໍາເອົາຜູ້ອອກແຮງງານທີ່ໂຕນໜີ ກັບຄືນປະເທດ;
9. ເກັບກໍາ ແລະ ລາຍງານຈໍານວນຜູ້ອອກແຮງງານລາວທີ່ສິ້ນສຸດສັນຍາ, ໂຕນໜີ ແລະ ສົ່ງກັບຄືນປະເທດ;
10. ແຈ້ງລາຍຊື່ຂອງພະນັກງານທີ່ເຮັດໜ້າທີ່ໃນການນໍາສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຊາບ;

11. ຕິດຕາມ ແລະ ຊ່ວຍຜູ້ອອກແຮງງານໃນການຈ່າຍເງິນທົດແທນຄືນ ໃນກໍລະນີຜູ້ອອກແຮງງານໄດ້ກູ້ຢືມເພື່ອເດີນທາງໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ຈາກທະນາຄານ ຫຼື ສະຖາບັນການເງິນທີ່ໄດ້ຮັບອະນຸຍາດ ຕາມລະບຽບການ;
12. ເຮັດໜ້າທີ່ໃນການຕິດຕາມ ແລະ ຊ່ວຍເຫຼືອຜູ້ອອກແຮງງານຕະຫຼອດໄລຍະທີ່ເຮັດວຽກ ຢູ່ສາທາລະນະລັດເກົາຫຼີ ຕາມພາລະບົດບາດທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 7
## ສັນຍາ

**ມາດຕາ 35 ສັນຍາ**

ສັນຍາກ່ຽວກັບການອະນຸຍາດຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ປະກອບມີ: ສັນຍາຮ່ວມມື (ບົດບັນທຶກຄວາມເຂົ້າໃຈ), ສັນຍາຈັດສົ່ງ, ສັນຍາຜູກພັນ ແລະ ສັນຍາຈ້າງງານ.

**ມາດຕາ 36 ສັນຍາການຮ່ວມມື**

ສັນຍາການຮ່ວມມື ແມ່ນ ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຈ້າງແຮງງານລະດູການ ລະຫວ່າງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ກັບແຂວງ ແລະ ບັນດາເມືອງຂອງ ສາທາລະນະລັດເກົາຫຼີ ທີ່ຕ້ອງການຈ້າງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ໂດຍກຳນົດຂອບເຂດການຮ່ວມມື ເພື່ອເປັນບ່ອນອີງໃຫ້ແກ່ການດຳເນີນການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ. ສັນຍາການຮ່ວມມືຕ້ອງເຮັດເປັນ 3 ພາສາ ຄື: ພາສາອັງກິດ, ພາສາລາວ ແລະ ພາສາເກົາຫຼີ.

**ມາດຕາ 37 ສັນຍາຈັດສົ່ງ**

ສັນຍາຈັດສົ່ງ ແມ່ນສັນຍາ ລະຫວ່າງກົມການຈັດຫາງານ ແລະ ວິສາຫະກິດບໍລິການຈັດຫາງານທີ່ຖືກມອບໝາຍຊ່ວຍດຳເນີນການຈັດສົ່ງ ເພື່ອເຮັດໜ້າທີ່ຕາມທີ່ກຳນົດໄວ້ໃນມາດຕາ 34.

**ມາດຕາ 38 ສັນຍາຜູກພັນ**

ສັນຍາຜູກພັນ ແມ່ນ ສັນຍາ ລະຫວ່າງກົມການຈັດຫາງານ ແລະ ຜູ້ອອກແຮງງານລາວ ທີ່ໄດ້ຮັບອະນຸຍາດໃຫ້ໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ໂດຍຜ່ານການຢັ້ງຢືນຈາກຜູ້ປົກຄອງ ແລະ ອົງການປົກຄອງຂັ້ນບ້ານ ຂອງຜູ້ອອກແຮງງານ.

**ມາດຕາ 39 ສັນຍາຈ້າງງານ**

ສັນຍາຈ້າງງານແມ່ນສັນຍາ ລະຫວ່າງຜູ້ອອກແຮງງານທີ່ໄດ້ຮັບອະນຸຍາດໃຫ້ໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ແລະ ຜູ້ນຳໃຊ້ແຮງງານທີ່ຈ້າງແຮງງານລາວໄປເຮັດວຽກຕາມລະດູການຢູ່ບັນເມືອງຂອງ ສາທາລະນະລັດເກົາຫຼີ ທີ່ໄດ້ຮ່ວມລົງນາມບົດບັນທຶກຄວາມເຂົ້າໃຈກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສັນຍາຈ້າງງານຕ້ອງເຮັດເປັນ 2 ພາສາ ຄື: ພາສາລາວ ແລະ ພາສາເກົາຫຼີ.

# ໝວດທີ 8
# ລາຍຮັບ ແລະ ຄ່າໃຊ້ຈ່າຍ

**ມາດຕາ 40 ລາຍຮັບ**

ຜູ້ອອກແຮງງານລາວ ທີ່ໄດ້ຮັບອະນຸຍາດໃຫ້ໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ແມ່ນຈະໄດ້ຮັບຄ່າຈ້າງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງເມືອງ ສາທາລະນະລັດເກົາຫຼີ ທີ່ຈ້າງຜູ້ອອກແຮງງານລາວ ໂດຍອັດຕາຄ່າຈ້າງ ແມ່ນບໍ່ຕໍ່າກວ່າເງິນເດືອນຂັ້ນພື້ນຖານທີ່ລັດຖະບານ ສາທາລະນະລັດເກົາຫຼີ ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 41 ຄ່າໃຊ້ຈ່າຍ**

ຜູ້ອອກແຮງງານລາວທີ່ມີຈຸດປະສົງໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍເອງທັງໝົດ ເປັນຕົ້ນ: ຄ່າໃຊ້ຈ່າຍສໍາລັບການປະກອບເອກະສານສ່ວນຕົວ, ຄ່າປີ້ຍົນໄປ-ກັບ, ຄ່າວີຊາເຮັດວຽກ, ຄ່າຝຶກອົບຮົມຂັ້ນພື້ນຖານ, ຄ່າຝຶກອົບຮົມກ່ອນການໄປເຮັດວຽກ, ຄ່າກວດສຸຂະພາບ, ຄ່າປະກັນໄພຕະຫຼອດໄລຍະຂອງການເຮັດວຽກ ແລະ ຄ່າບໍລິການອື່ນໆ ໂດຍກໍາລັງແຮງງານຈະຈ່າຍງວດດຽວກ່ອນການເດີນທາງໄປເຮັດວຽກ ຢູ່ສາທາ ລະນະລັດເກົາຫຼີ.

# ໝວດທີ 9
# ການເຂົ້າເຖິງແຫຼ່ງທຶນ ແລະ ການເປີດບັນຊີ

**ມາດຕາ 42 ການເຂົ້າເຖິງແຫຼ່ງທຶນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ຜູ້ອອກແຮງງານລາວ ໄດ້ເຂົ້າເຖິງແຫຼ່ງທຶນໃນອັດຕາດອກເບ້ຍຕໍ່າ ເພື່ອນໍາໃຊ້ສໍາລັບໄປເຮັດວຽກຢູ່ຕ່າງປະເທດ ດ້ວຍການຮ່ວມມືກັບທະນາຄານ ແລະ ສະຖາບັນການເງິນ ທີ່ສາມາດສະໜອງທຶນໃຫ້ຜູ້ອອກແຮງງານ ສອດຄ່ອງກັບເງື່ອນໄຂຂອງການໄປເຮັດວຽກຢູ່ຕ່າງປະເທດ. ວິສາຫະກິດບໍລິການຈັດຫາງານ ທີ່ໄດ້ຖືກມອບໝາຍໃຫ້ຊ່ວຍດໍາເນີນການໃຫ້ນໍາໃຊ້ແຫຼ່ງທຶນ ສະໜອງໃຫ້ກັບຜູ້ອອກແຮງງານ ຕາມການກໍານົດຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເທົ່ານັ້ນ.

**ມາດຕາ 43 ການເປີດບັນຊີ**

ຜູ້ອອກແຮງງານລາວທີ່ໄດ້ຮັບອະນຸຍາດໃຫ້ໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ໃຫ້ເປີດບັນຊີຢູ່ທະນາຄານ ຕາມການກໍານົດຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເທົ່ານັ້ນ ເພື່ອໃຫ້ສາມາດດໍາເນີນການຊໍາລະສະສາງ ແລະ ສົ່ງເງິນກັບຄືນປະເທດ ໂດຍຜ່ານລະບົບທະນາຄານ.

# ໝວດທີ 10
# ຂໍ້ຫ້າມ

**ມາດຕາ 44 ຂໍ້ຫ້າມສໍາລັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ຫ້າມກະຊວງແຮງງານ ແລະ ສະຫວັດດີການສັງຄົມ ປະຕິບັດ ດັ່ງນີ້:

1. ເຊັນສັນຍາຮ່ວມມືກັບບັນດາເມືອງຂອງສາທາລະນະລັດເກົາຫຼີ ທີ່ຕ້ອງການຈ້າງຜູ້ອອກແຮງງານລາວ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຮ່ວມມືກັບທະນາຄານ ແລະ ສະຖາບັນການເງິນໂດຍບໍ່ໄດ້ຮັບອະນຸຍາດ;

3. ມອບໝາຍໃຫ້ວິສາຫະກິດບໍລິການຈັດຫາງານ ຊ່ວຍດໍາເນີນວຽກງານການຈັດສົ່ງໄປເຮັດວຽກຕາມລະດູການ ຢູ່ ສາທາລະນະລັດເກົາຫຼີ ໂດຍບໍ່ໄດ້ຮັບອະນຸຍາດ;
4. ອະນຸຍາດຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ແບບບໍ່ຖືກຕ້ອງ;
5. ອະນຸຍາດ ໃຫ້ວິສາຫະກິດບໍລິການຈັດຫາງານ ປະກາດຮັບສະໝັກງານ ແລະ ຄັດເລືອກຜູ້ອອກແຮງງານໂດຍກົງ;
6. ເກັບຄ່າທໍານຽມ ແລະ ຄ່າບໍລິການຈາກຜູ້ອອກແຮງງານ ແລະ ວິສາຫະກິດບໍລິການຈັດຫາງານ ໂດຍບໍ່ໄດ້ຮັບອະນຸຍາດ;
7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 45 ຂໍ້ຫ້າມສໍາລັບພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ ແລະ ເມືອງ**

ຫ້າມພະແນກແຮງງານ ແລະ ສະຫວັດດີການສັງຄົມຂັ້ນແຂວງ ແລະ ເມືອງ ດັ່ງນີ້:

1. ຮ່ວມກັບວິສາຫະກິດບໍລິການຈັດຫາງານ ຫຼື ບຸກຄົນ ແລະ ນິຕິບຸກຄົນ ຮັບສະໝັກ ແລະ ຄັດເລືອກເອົາຜູ້ອອກແຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;
2. ອໍານວຍຄວາມສະດວກໃຫ້ຍາດຕິພີ່ນ້ອງຂອງຕົນໄດ້ເຂົ້າສໍາພາດ;
3. ເມີນເສີຍ ຫຼື ຂັດຂວາງຕໍ່ກັບການປະກາດ ຮັບສະໝັກ ແລະ ຄັດເລືອກເອົາຜູ້ອອກແຮງງານ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
4. ເກັບ ຫຼື ອໍານວຍຄວາມສະດວກໃຫ້ມີການເກັບຄ່າທໍານຽມ ແລະ ຄ່າບໍລິການນໍາແຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;
5. ເກັບເງິນ ຫຼື ວັດຖຸນໍາຜູ້ອອກແຮງງານ ເພື່ອເປັນການມັດຈໍາ ໃນການໄປເຮັດວຽກຢູ່ຕ່າງປະເທດ;
6. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງໃຫ້ກັບຜູ້ອອກແຮງງານ;
7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 46 ຂໍ້ຫ້າມຕໍ່ວິສາຫະກິດບໍລິການຈັດຫາງານ**

ຫ້າມວິສາຫະກິດບໍລິການຈັດຫາງານ ປະຕິບັດ ດັ່ງນີ້:

1. ປະສານງານກັບບັນດາເມືອງຂອງ ສ.ເກົາຫຼີ ທີ່ຕ້ອງການຈ້າງຜູ້ອອກແຮງງານລາວ ໂດຍກົງ;
2. ໂຄສະນາຊວນເຊື່ອ ເພື່ອເອົາຜູ້ອອກແຮງງານລາວໄປເຮັດວຽກ ແລະ ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງໃຫ້ກັບແຮງງານ ແລະ ສັງຄົມ;
3. ນໍາໃຊ້ແບບຟອມຂຶ້ນທະບຽນຂອງຕົນເອງ, ປະກາດຮັບສະໝັກ ແລະ ຄັດເລືອກເອົາຜູ້ອອກແຮງງານດ້ວຍຕົນເອງ;
4. ເກັບຄ່າທໍານຽມ, ຄ່າບໍລິການໂດຍບໍ່ໄດ້ຮັບອະນຸຍາດ ຫຼື ເກັບຫຼາຍກວ່າການກໍານົດຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
5. ຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກ ໂດຍບໍ່ໄດ້ຮັບອະນຸຍາດ;
6. ເມີນເສີຍ ຫຼື ບໍ່ແກ້ໄຂບັນຫາທີ່ເກີດຂຶ້ນກັບຜູ້ອອກແຮງງານ;
7. ປິດບັງຂໍ້ມູນ ແລະ ບໍ່ແກ້ໄຂການໂຕນໜີຂອງຜູ້ອອກແຮງງານ;
8. ສ້າງເງື່ອນໄຂທີ່ເປັນການບັງຄັບຜູ້ອອກແຮງງານ;
9. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 47 ຂໍ້ຫ້າມຕໍ່ຜູ້ອອກແຮງງານ**

ຫ້າມຜູ້ອອກແຮງງານ ປະຕິບັດ ດັ່ງນີ້:

1. ປະລະໜ້າທີ່ ຫຼື ຢຸດເຊົາວຽກ ໂດຍບໍ່ໄດ້ຮັບອະນຸຍາດ;
2. ປ່ຽນຜູ້ໃຊ້ແຮງງານ ຫຼື ກັບຄືນປະເທດ ໂດຍບໍ່ຖືກຕ້ອງ ຫຼື ບໍ່ໄດ້ຮັບອະນຸຍາດ;

3. ຫຼົບໜີຈາກສະຖານທີ່ເຮັດວຽກ;
4. ກັບຄືນປະເທດກ່ອນສິ້ນສຸດສັນຍາແຮງງານ ໂດຍບໍ່ມີເຫດຜົນພຽງພໍ;
5. ມີພຶດຕິກຳທີ່ສົ່ງຜົນເສຍຫາຍຕໍ່ກັບຜູ້ໃຊ້ແຮງງານ;
6. ໂຄສະນາຂໍ້ມູນທີ່ບິດເບືອນຈາກຄວາມຈິງ;
7. ລະເມີດ ສັນຍາຜູກພັນ, ສັນຍາຈ້າງງານ ແລະ ກົດໝາຍ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ຂອງປະເທດສົ່ງແຮງງານ ແລະ ປະເທດຮັບແຮງງານ.

## ໝວດທີ 11
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 48 ມາດຕະການຕໍ່ຜູ້ອອກແຮງງານ**

ຜູ້ອອກແຮງງານທີ່ລະເມີດຂໍ້ຫ້າມ ຈະຖືກດຳເນີນມາດຕະການ ດັ່ງນີ້:

1. ຖືກຕັກເຕືອນ ແລະ ສຶກສາອົບຮົມ;
2. ບໍ່ອະນຸຍາດໃຫ້ສະໝັກໄປເຮັດວຽກ ຢູ່ສາທາລະນະລັດເກົາຫຼີ ໃນຄັ້ງຕໍ່ໄປ;
3. ບໍ່ພິຈາລະນາອະນຸຍາດໃຫ້ບຸກຄົນໃນຄອບຄົວ ໄປເຮັດວຽກຢູ່ຕ່າງປະເທດ;
4. ທົດແທນຄືນຕໍ່ກັບຄ່າເສຍຫາຍທີ່ເກີດຂຶ້ນທັງໝົດ.

**ມາດຕາ 49 ມາດຕະການຕໍ່ວິສາຫະກິດບໍລິການຈັດຫາງານທີ່ຖືກມອບໝາຍ**

ວິສາຫະກິດບໍລິການຈັດຫາງານທີ່ຖືກມອບໝາຍ ຈະຖືກດຳເນີນມາດຕະການ ຕາມກໍລະນີ ດັ່ງນີ້:

1. ຜູ້ອອກແຮງງານໂຕນໜີອອກຈາກສະຖານທີ່ເຮັດວຽກເທົ່າກັບ 10 ເປີເຊັນຂອງຈຳນວນຜູ້ອອກແຮງງານທີ່ໄດ້ຈັດສົ່ງແຕ່ລະຄັ້ງ ຈະຖືກກ່າວເຕືອນ, ເຮັດບົດບັນທຶກ ແລະ ນຳເອົາຜູ້ອອກແຮງງານກັບຄືນປະເທດ ຕາມທີ່ໄດ້ກຳນົດໄວ້ໃນສັນຍາວ່າດ້ວຍການເປັນຜູ້ຊ່ວຍ ຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກ ຢູ່ສາທາລະນະລັດເກົາ ຫຼີ;
2. ຜູ້ອອກແຮງງານໂຕນໜີອອກຈາກສະຖານທີ່ເຮັດວຽກເທົ່າກັບ 20 ເປີເຊັນຂອງຈຳນວນຜູ້ອອກແຮງງານທີ່ໄດ້ຈັດສົ່ງແຕ່ລະຄັ້ງ ຈະຖືກຢຸດການເຮັດໜ້າທີ່ເປັນຜູ້ຊ່ວຍ ຈົນກວ່າຈະນຳເອົາຜູ້ອອກແຮງງານເຫຼົ່ານັ້ນກັບຄືນປະເທດ;
3. ຫາກພົບເຫັນ, ມີຫຼັກຖານ ຫຼື ພະຍານວ່າວິສາຫະກິດບໍລິການຈັດຫາງານທີ່ຖືກມອບໝາຍ ລະເມີດຂໍ້ຫ້າມຕາມທີ່ກຳນົດໄວ້ໃນມາດຕາ 46 ຈະຖືກດຳເນີນມາດຕະການ ດັ່ງນີ້:
   - ຄັ້ງທີ 1: ຕັກເຕືອນ ແລະ ສຶກສາອົບຮົມ ພ້ອມທັງທົດແທນຄືນຄ່າເສຍຫາຍທັງໝົດ;
   - ຄັ້ງທີ 2: ຖືກໂຈະສັນຍາວ່າດ້ວຍການເປັນຜູ້ຊ່ວຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເວລາ 1 ປີ ພ້ອມທັງທົດແທນຄືນຄ່າເສຍຫາຍທັງໝົດ;
   - ຄັ້ງທີ 3: ຖືກຍົກເລີກສັນຍາວ່າດ້ວຍການເປັນຜູ້ຊ່ວຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ພ້ອມທັງທົດແທນຄືນຄ່າເສຍຫາຍທັງໝົດ;
   - ຄັ້ງທີ 4: ຖືກໂຈະໃບອະນຸຍາດເຄື່ອນໄຫວທຸລະກິດບໍລິການຈັດຫາງານ ຊົ່ວຄາວ ພ້ອມທັງທົດແທນຄືນຄ່າເສຍຫາຍທັງໝົດ;
   - ຄັ້ງທີ 5: ຖືກຍົກເລີກໃບອະນຸຍາດເຄື່ອນໄຫວທຸລະກິດບໍລິການຈັດຫາງານ ພ້ອມທັງທົດແທນຄືນຄ່າເສຍຫາຍທັງໝົດ ແລະ ຖືກດຳເນີນມາດຕະການຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 50 ມາດຕະການຕໍ່ບຸກຄົນ ແລະ ນິຕິບຸກຄົນທີ່ບໍ່ໄດ້ຮັບອະນຸຍາດ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ເຄື່ອນໄຫວຮັບສະໝັກງານ, ຄັດເລືອກເອົາຜູ້ອອກແຮງງານ ແລະ ຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຕາມລະດູການ ຢູ່ສາທາລະນະລັດເກົາຫຼີ ໂດຍບໍ່ໄດ້ຮັບອະນຸຍາດ ແມ່ນຈະຖືກປັບໃໝ 10.000.000 ກີບຕໍ່ຄົນຕໍ່ຄັ້ງ ພ້ອມທັງຊົດເຊີຍຄ່າເສຍຫາຍທີ່ເກີດຂຶ້ນທັງໝົດ ແລະ ຖືກດຳເນີນມາດຕະການ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 12
## ບົດບັນຍັດສຸດທ້າຍ

**ມາດຕາ 51 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມການຈັດຫາງານ, ບັນດາພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ແລະ ນະຄອນ, ອົງການປົກຄອງຂັ້ນບ້ານ ແລະ ວິສາຫະກິດບໍລິການຈັດຫາງານ ແລະ ແຮງງານທີ່ຖືກຈັດສົ່ງໄປເຮັດວຽກຕາມລະດູການ ຢູ່ ສາທາລະນະລັດເກົາຫຼີ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 52 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ໃບຄຳ ຂັດທິຍະ